# ການຂຽນຂ່າວ



# ຂ່າວແມ່ນຫຍັງ?
# ແລະ
# ຂໍ້ມູນແມ່ນຫຍັງ?

ຄຳຖາມປະຈຳວັນ

# ຂ່າວແມ່ນຫຍັງ?

# ແມ່ນຫຍັງ ທີ່ເຮັດໃຫ້ເກີດເປັນຂ່າວ?

- ເປັນເລື່ອງທີ່ມີຜົນກະທົບຕໍ່ຜູ້ຊົມຂອງທ່ານ ຫຼື ບໍ່?
- ເປັນເລື່ອງທີ່ຫາກໍ່ເກີດຂຶ້ນມາໃໝ່ໆເລີຍ ຫຼື ບໍ່?
- ເປັນເລື່ອງທີ່ກ່ຽວກັບໃຜຄົນໜຶ່ງທີ່ມີຊື່ສຽງ ຫຼື ບໍ່?
- ເປັນເລື່ອງທີ່ເກີດຂຶ້ນໃກ້ໂຕ ຂອງຜູ້ຊົມ ຫຼື ບໍ່?
- ເປັນເລື່ອງທີ່ກ່ຽວກັບຂໍ້ໂຕ້ຖຽງ ຫຼື ບໍ່?
- ເປັນເລື່ອງແປກໆ ຫຼື ຄາດຄິດບໍ່ເຖິງ ຫຼື ບໍ່?
- ເປັນເລື່ອງທີ່ໜ້າສົນໃຈ, ສຳຄັນ ຫຼື ມີກະແສ ຫຼື ບໍ່?
- ເປັນເລື່ອງທີ່ຜູ້ຄົນກຳລັງເວົ້າເຖິງ ຫຼື ບໍ່?
- ເປັນເລື່ອງທີ່ເຂົ້າເຖິງອາລົມຂອງຄົນ ຫຼື ບໍ່?
- ເລື່ອງນັ້ນມີຂໍ້ພິສູດທີ່ສາມາດຢືນຢັນໄດ້ບໍ່?

ຍິ່ງມີອົງປະກອບເຫຼົ່ານີ້ຫຼາຍເທົ່າໃດ ຍິ່ງຈະເຮັດໃຫ້ເລື່ອງນັ້ນມີໂອກາດເປັນຂ່າວສູງເທົ່ານັ້ນ







# ພື້ນຖານຂອງການຂຽນຂ່າວ

## 5Ws ແລະ 1H

- Who? ແມ່ນໃຜ?
- What? ແມ່ນຫຍັງ?
- Why? ເປັນຫຍັງ?
- Where? ຢູ່ໃສ?
- When? ເມື່ອໃດ?
- How? ແນວໃດ?



# ມີໄຟໄໝ້ເຮືອນພັກ ບາດເຈັບ 2 ຄົນ, ອົບພະຍົບຫຼາຍສິບຄົນ

ມີໄຟໄໝ້ເຮືອນພັກ Green Valley ໃນຕອນເຊົ້າຂອງມື້ນີ້, ເຮັດໃຫ້ຜູ້ພັກເຊົ່າ 2 ຄົນ ໄດ້ຮັບບາດເຈັບ ແລະ ເຮັດໃຫ້ອີກຫລາຍສິບຄົນ ຕ້ອງໄດ້ອົບພະຍົບອອກຈາກທີພັກ. ເຫດໄຟໄໝ້ ເກີດໃນເວລາປະມານ 04:30 ໂມງເຊົ້າ, ໄຟໄດ້ລຸກໄໝ້ເຮືອນພັກ ຊັ້ນ 3 ແລະ ຊັ້ນ 4 ຂອງອາຄານ ທີ່ຕັ້ງຢູ່ ຖະໜົນສາມແສນໄທ ນະຄອນຫຼວງວຽງຈັນ.

ເຈົ້າໜ້າທີ່ດັບເພີງ ໄດ້ໄປຮອດບ່ອນເກີດເຫດຢ່າງໄວວາ ແລະ ສາມາດຄວບຄຸມໄຟໄດ້ໃນເວລາ 6:00 ໂມງເຊົ້າ, ເພື່ອປ້ອງກັນບໍ່ໃຫ້ໄຟແຜ່ລາມໄປຮອດຕຶກອາຄານທີ່ຢູ່ໃກ້ຄຽງ ແລະ ຜູ້ບາດເຈັບສອງຄົນກໍ່ໄດ້ຖືກນຳສົ່ງໄປໂຮງໝໍສູນກາງ, ເຊິ່ງອາການຂອງເຂົາເຈົ້າ ແມ່ນປອດໄພແລ້ວ.

ເຈົ້າໜ້າທີ່ດັບເພີງ ທ່ານ ສົມໃຈ ພົມມະສັກ ກ່າວວ່າ: “ພວກເຮົາໂຊກດີທີ່ບໍ່ມີຜູ້ເສຍຊີວິດ,” ລາວຍັງໄດ້ເວົ້າອີກວ່າ “ຍ້ອນໄດ້ຮັບການລາຍງານຂ່າວໄຟໄໝ້ຢ່າງໄວວາ, ດັ່ງນັ້ນ ຈຶ່ງເຮັດໃຫ້ທີມງານຂອງພວກເຮົາສາມາດເອົາຄົນອອກຈາກອາຄານໄດ້ທັນເວລາ.”

ເຈົ້າໜ້າທີ່ກຳລັງສືບສວນສອບສວນຫາສາເຫດ ຂອງການເກີດໄຟໄໝ້ໃນຄັ້ງນີ້. ຈາກລາຍງານເບື້ອງຕົ້ນ ຄາດວ່າອາດເກີດຈາກໄຟຟ້າລັດວົງຈອນ. ຜູ້ພັກອາໄສທີ່ໄດ້ຮັບຜົນກະທົບ ໄດ້ຍ້າຍໄປຢູ່ບ່ອນທີ່ພັກອາໄສທີ່ຈັດສັນໂດຍເຈົ້າໜ້າທີ່.

ພວກເຮົາຈະລາຍງານຂ່າວເພີ່ມເຕີມ ຖ້າຫາກມີຂໍ້ມູນມາໃໝ່.

# ຮູບແບບການຂຽນຂ່າວ.

- ເນື້ອຫາຫຼັກ: ຄວາມສຳຄັນຂອງເນື້ອເລື່ອງ, ສິ່ງທີ່ເກີດຂື້ນໃໝ່.
- ໃນປະໂຫຍກທຳອິດຕ້ອງໃຫ້ມີ 5 Ws ແລະ 1H ຫຼາຍທີ່ສຸດ.
- ຕ້ອງແມ່ນຄວາມຈິງ, ບໍ່ອີງໃສ່ຄວາມຄິດເຫັນ.
- ຕ້ອງຈະແຈ້ງ, ເຂົ້າໃຈງ່າຍ, ໃຊ້ຄຳສັບທີ່ເວົ້າກັນໃນຊີວິດປະຈຳວັນ ແລະ ບໍ່ໃຫ້ໃສ່ຕົວອັກສອນຫຍໍ້ທີ່ບໍ່ຮູ້ຈັກ.



# ການເຮັດວຽກເປັນກຸ່ມ.





- ແບ່ງອອກເປັນກຸ່ມລະ 4 ຄົນ.
- ກຳນົດຫົວຂໍ້ຂ່າວ.
- ຫົວຂໍ້: ໂຄງການຝຶກອົບຮົມນີ້.
- ຜູ້ອ່ານ: ຜູ້ອ່ານແມ່ນ ຄົນຢູ່ໃນປະເທດຂອງທ່ານ.

- ***ຂໍ້ຄວນຈື່ຈຳ!***
- ***ຕ້ອງໃຫ້ມີ 5Ws ແລະ 1H ຄົບຖ້ວນ.***
- ***ເຮັດໃຫ້ບົດຂ່າວໜ້າສົນໃຈ ສຳລັບຜູ້ອ່ານຂອງທ່ານ.***

# ຂໍຂອບໃຈ



Do not use following slide

# Group work Assignment





- Work in teams of 4
- Write a short news story (at least 3 paragraphs) on the plane crash using the relevant information in the list.
- *Audience*: Readers in your country




***Remember!***

- Use inverted pyramid style (most important info at the beginning)
- Consider the 5 Ws and 1 H
- You will **not** use all the information on the list.